**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກຜັກທຽມ



**ເອກະສານ ປະກອບການຝຶກອົບຮົມ 11:**

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 11:
# ແນະນໍາເຕັກນິກການປູກຜັກທຽມ

## ສາລະບານ

ຜັກທຽມ (Garlic)....................2
ລັກສະນະທົ່ວໄປ .................... 3
ແນວພັນທີ່ໃຊ້ປູກ....................3
ການກຽມໜານປູກ ....................4
ການປູກ ....................5
ການບົວລະບັດຮັກສາ ....................5
ການເກັບກ່ຽວ ....................7

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ຂໍ້ແນະນຳ ເຕັກນິກການປູກຜັກທຽມ



## ຜັກທຽມ (Garlic)

ຜັກທຽມເປັນພືດທີ່ມີຄວາມສຳຄັນຕໍ່ການບໍລິໂພກ ແລະອຸປະໂພກຂອງມະນຸດຢ່າງຫຼວງຫຼາຍ ນອກຈະໃຊ້ເປັນເຄື່ອງປະກອບໃນການປຸງແຕ່ງອາຫານສະນິດຕ່າງໆ ແລ້ວຍັງສາມາດນຳໃຊ້ເຂົ້າໃນການປຸງແຕ່ງຢາປົວພະຍາດສະນິດຕ່າງໆ ໂດຍສະເພາະແມ່ນຢາແກ້ ລົດໄຂມັນຂອງຫົວໃຈ ຢາຕ້ານພະເພດ **ໄວຣັດສ໌** ບາງປະເພດ (ໄຂ້ຫວັດ) ແລະປຸງແຕ່ງເປັນສະໝຸນໄພປ້ອງກັນສັດຕູພືດບາງສະນິດ. ການປູກຜັກທຽມເປັນກິດຈະກຳແບບກະເສດອຸດສາຫະກຳແມ່ນ ຢູ່ປະເທດຈີນ ວຽດນາມ ແລະປະເທດອື່ນໃນເຂດອົບອຸ່ນ ແລະເຄິ່ງອົບອຸ່ນ, ສຳລັບຢູ່ປະເທດເຮົາ ແມ່ນມີການຜະລິດຢ່າງກວ້າງຂວາງ ໂດຍສະເພາະແມ່ນຢູ່ແຂວງ ຊຽງຂວາງ ຫຼວງພະບາງ ແລະແຂວງອື່ນໆໃນເຂດພາກເໜືອ.

## ລັກສະນະທົ່ວໄປ

ຜັກທຽມເປັນພືດໃນຕະກຸນ Alliaceae ມີຊື່ທາງວິທະຍາສາດວ່າ Allium Sativum Linn. ໂດຍມີຊື່ທີ່ເອີ້ນກັນໃນທ້ອງຖິ່ນຕ່າງໆເຊັ່ນ: ຜັກທຽມຂາວ, ຜັກທຽມຈີນ ແລະຜັກທຽມຜີ, ຜັກທຽມດໍາ... ຜັກທຽມສາມາດປູກໄດ້ໃນດິນເກືອບທຸກສະນິດ ແຕ່ມັກດິນຊາຍແກມຕົມປະຕິກິລິຍາຂອງດິນ (pH) 5.5 ຫາ 6.8 ຊ່ວງໄລຍະເວລາການຈະເລີນເຕີບໂຕ ແມ່ນຕ້ອງການຄວາມຊຸ່ມຊື່ນຂອງດິນສູງພໍສົມຄວນ ແລະ ຕ້ອງການດິນແຫ້ງໃນເວລາເລີ່ມແກ່. ພືດນີ້ຕ້ອງການແສງແດດຫຼາຍ. ໃນລະຫວ່າງຕອນປູກ ອຸນຫະພູມທີ່ເໝາະສົມ ແມ່ນປະມານ 18 ຫາ 24°C. ໂດຍ ທົ່ວໄປແລ້ວ ຜັກທຽມເປັນຜັກທີ່ມີອາຍຸຫຼາຍປີ (perennial) ແຕ່ປູກເປັນຜັກມີອາຍຸປີດຽວ (annnal). ອາຍຸແຕ່ປູກ (ດໍາຫົວ) ເຖິງເວລາເກັບກ່ຽວ ປະມານ 90 ຫາ 150 ວັນ (ຂຶ້ນກັບແນວພັນດໍຫຼືປີ). ລະດູປູກທີ່ເໝາະສົມ ລະຫວ່າງເດືອນ ຕຸລາ ຫາ ມີນາແຕ່ປູກໄດ້ຜົນດີທີ່ສຸດແມ່ນ ເດືອນ ພະຈິກ ຫາ ມັງກອນ ຊຶ່ງຊ່ວງດັ່ງກ່າວມີອາກາດໜາວເຢັນ.

## ແນວພັນທີ່ໃຊ້ປູກ

ພັນທີ່ໃຊ້ປູກໃນບ້ານເຮົາ ສາມາດແບ່ງຕາມອາຍຸການເກັບກ່ຽວ 3 ພັນ:

- ພັນດໍ ຫຼືພັນພື້ນເມືອງ: ລັກສະນະໃບແຫຼມ, ລໍາຕົ້ນແຂງ, ກີບ ແລະ ຫົວສີຂຽວ, ມີກິ່ນຂືວ ແລະເຜັດມີອາຍຸການເກັບກ່ຽວປະມານ 78 ຫາ 90 ວັນ.

# ການເກັບກ່ຽວ

ພັນກາງປະມານ 90 ຫາ110 ວັນ, ພັນງັນ (ປີ) 150 ວັນ ຫຼັງຈາກປູກ. ການເກັບກ່ຽວຄວນເລືອກເວລາຜັກທຽມແກ່ທີ່ສຸດ ໂດຍສັງເກດຈາກສ່ວນ ຂອງຍອດຈະເລີນຂື້ນມາໜາແລ້ວ ແລະໃບເລີ່ມແຫ້ງ ບໍ່ຄວນໃຫ້ກາຍໄລຍະເກັບກ່ຽວ ເພາະຜັກທຽມຈະມີຄຸນນະພາບບໍ່ດີ. ເມື່ອຫຼົກຜັກທຽມອອກຈາກໜານ ແລ້ວເອົາຕາກແດດໄວ້ປະມານ 4 ຫາ 5 ແດດ ແລ້ວນຳມາຕາກ ລົມອີກໄລຍະນຶ່ງໃຫ້ຫົວ ແລະໃບແຫ້ງດີ ແລ້ວຈື່ງນຳມາຄັດຂະໜາດມັດເປັນຈຸກຕາມຄວາມຕ້ອງການ ແລ້ວນຳມາແຂນໄວ້ໃນເຮືອນເປີດ ຫຼື ກ້ອງຕາລ່າງທີ່ລົມພັດຜ່ານ ລະບາຍອາກາດດີ ເປັນເວລາ 3 ຫາ 4 ອາທິດ ຈົນຜັກທຽມແຫ້ງດີແລ້ວຈື່ງນຳໃຊ້ຕໍ່ໄປ.



- ພັນອາຍຸກາງ: ລັກສະນະໃບນ້ອຍຍາວ ລຳຕົ້ນໃຫ່ຍແຂງ, ຫົວຂະໜາດກາງ ( ປະລິມານ 30 ຫາ 40 ຫົວ/ກິໂລ) ຫົວ ແລະກີບມີສີມ້ວງ, ອາຍຸການເກັບກ່ຽວ 90 ຫາ 120 ວັນ.
- ພັນປີ (ອາຍຸຍາວ): ລັກສະນະໃບກວ້າງຍາວ ລຳຕົ້ນນ້ອຍ ຫົວໃຫຍ່ ເປືອກຫຸ້ມສີຊົມພູ ນ້ຳໜັກ ປະມານ 15 ຫາ 20 ຫົວ/ກິໂລ ອາຍຸການເກັບກ່ຽວປະມານ 150 ວັນ.

# ການຕຽມໜານປູກ

ເນື່ອງຈາກຜັກທຽມເປັນພືດຮາກຕື້ນ ການຕຽມດິນຈຳເປັນຕ້ອງໄດ້ຂຸດ ຫຼື ໄຖໃຫ້ເລິກ ປະ ມານ 15 ຫາ 20 ຊຕມ. ຕາກດິນໄວ້ປະມານ 5 ຫາ 10 ວັນ. ປະສົມຝຸ່ນບົ່ມ ຫຼືຝຸ່ນຄອກ ທີ່ສະຫຼາຍຕົວແລ້ວ ຄົນເຂົ້າກັບດິນໃຫ້ທົ່ວພອນ ແລະຍ່ອຍດິນໃຫ້ລະອຽດ ຍົກເປັນໜານໂດຍມີຂະໜາດກວ້າງ 1 ຫາ 1.5 ແມັດ.

# ການຕຽມແນວພັນປູກ

ໃຊ້ຫົວຜັກທຽມທີ່ແກະຫົວແລ້ວມາປູກ ຄັດເລືອກເອົາສະເພາະກີບທີ່ສົມບູນ ແລະແກ່ແຫ້ງດີແຕ່ສຳຄັນຕ້ອງໃຫ້ຫົວຜັກທຽມທີ່ຈະໃຊ້ເປັນແນວປູກໄດ້ພັກຕົວໄລຍະນຶ່ງ ກ່ອນປູກລົງໃນໜານ. ເນື້ອທີ່ 1 ເຮັກຕາໃຊ້ແນວພັນປະມານ 500 ຫາ 800 ກິໂລ.

# ການປູກ

ຫຼັງຈາກຕຽມໜານປູກ ແລະກະຕຽມແນວພັນໄວ້ແລ້ວກ່ອນປູກ ຄວນຫົດນ້ຳໜານ ໃຫ້ຊຸ່ມເສຍກ່ອນປູກເລິກປະມານ 2/3 ຂອງກີບລົງໃນດິນ. ການປູກໃຊ້ໄລຍະຫ່າງຕົ້ນ ແລະແຖວ 50 x 20 ຊຕມ. ຫຼື 10 x 10 ຊຕມ. ຫຼັງຈາກປູກຕາມໄລຍະດັ່ງ ແລ້ວປົກ ດ້ວຍເຟືອງ ຫຼື ຫຍ້າແຫ້ງໜາພໍສົມຄວນ ເພື່ອຮັກສາຄວາມຊຸ່ມຊື່ນຂອງດິນ ແລະຄວຍຄຸມຫຍ້າແລ້ວຫົດນ້ຳໃຫ້ຊຸ່ມ ອີກເທື່ອນຶ່ງ.

# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ໃຫ້ໃສ່ຝຸ່ນ ທີ່ມີອັດຕາສ່ວນ ໃນໂຕເຈນ (N) ແລະທາດ ໂຟດສຟໍ(P) 1 ສ່ວນທາດໂປຕັດຊຽມ (K) 2 ສ່ວນເຊັ່ນ: ຝຸ່ນເຄມີ ສູດ 10_10_15 ຫຼື 13_13_21 ກໍໄດ້ ໃນຈຳນວນ 350 ຫາ 700 ກິໂລ/ເຮັກຕາ. ຝຸ່ນທີ່ໃສ່ແບ່ງເປັນສອງເທື່ອ: ເທື່ອທີ່ໜຶ່ງ ໃສ່ເປັນຝຸ່ນຮອງ ພື້ນຕອນປູກຈຳນວນ 70 % ແລ້ວພວນກີບລົງດິນ. ເທື່ອທີ່ສອງ ໃສ່ເມື່ອຜັກທຽມອາຍຸໄດ້ 30 ວັນ ໂດຍໃສ່ແບບໂຣຍຂ້າງຕົ້ນ ຫຼືຫວ່ານທົ່ວໜານ ນອກຈາກນີ້ ໃນໄລຍະເລີ່ມມີການຈະເລີນເຕີບໂຕ ເມື່ອຜັກທຽມອາຍຸປະມານ 10 ຫາ 15 ວັນອາດ ໃສ່ຝຸ່ນຢູເຣຍ ໃນຈຳນວນ 120 ຫາ 170 ກິໂລ/ໄລ່ ເພື່ອເລັ່ງການຈະ ເລີນເຕີບໂຕ.



## ການໃຫ້ນ້ຳ

ຄວນໃຫ້ນ້ຳຢ່າງສະໝ່ຳສະເໝີພຽງພໍໃນຊ່ວງການຈະເລີນເຕີບໂຕ ແລະ ຢຸດການໃຫ້ນ້ຳເມື່ອຫົວເລີ່ມແກ່.

## ການປົກໜ້າດິນ

ມີຄວາມຈຳເປັນເພື່ອຊ່ວຍຮັກສາຄວາມຊຸ່ມຊື່ນໃນດິນ ເຮັດໃຫ້ປະຢັດການໃຫ້ນ້ຳ ແລະລຸດຄ່າໃຊ້ຈ່າຍໃນການເສຍຫຍ້າອີກດວ້ຍ. ການປົກໜ້າດິນ ອາດໃຊ້ ເຟືອງ ຫຼື ວັດຖຸອື່ນໆ ທີ່ຫາໄດ້ໃນ ທ້ອງຖິ່ນນັ້ນ.

## ການເສຍຫຍ້າ

ຖືວ່າເປັນບັນຫາໃນການປູກຜັກທຽມ ຄວນວາງແຜນໃຫ້ດີໃນການປ້ອງກັນກຳຈັດ ຊຶ່ງສາມາດໃຊ້ມືຫຼືກໃນເບື້ອງຕົ້ນເວລາທີ່ຫຍ້າຍັງນ້ອຍ ແລະ ອາດຈະໃຊ້ຢາຄຸມຫຍ້າທີ່ພົດ ຫຼື ຫຍ້າບໍ່ສາມາດງອກໄດ້ຢາ ທີ່ແນະນຳໃຫ້ໃຊ້ມີຊື່ການຄ້າວ່າອາລາຄໍ (alachlor) ໃນຈຳນວນ 2.50 ລິດ/ເຮັກຕາ.